**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງອຸດສາຫະກຳ ແລະ ການຄ້າ

ກອງທຶນສົ່ງເສີມ ຈບນກ

ເລກທີ 0372 /ທສວ

ນະຄອນຫຼວງວຽງຈັນ, ວັນທີ 26 ມິນາ 2025

## ໜັງສືແຈ້ງເຊີນຍື່ນເຈດຈຳນົງຄວາມສົນໃຈ ສຳລັບການບໍລິການສ້າງເວັບໄຊ www.msmepa.org ຂອງ ສຈບນກ ແລະ ສ້າງເວັບໄຊ ຂອງ ທສວ

1. ກອງທຶນສົ່ງເສີມຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ (ທສວ), ກະຊວງອຸດສາຫະກຳ ແລະ ການຄ້າ ໄດ້ຮັບອະນຸມັດງົບປະມານ ປະຈຳປີ 2025 ຂອງ ທສວ ໃນການຈັດຈ້າງບໍລິສັດທີ່ປຶກສາ ເພື່ອດຳເນີນການ *[ສ້າງເວັບໄຊ www.msmepa.org ຂອງ ສຈບນກ];*
2. ການບໍລິການທີ່ປຶກສາ " ການບໍລິການ" ລວມເອົາການສະໜອງຂອງທີມງານ ຂອງບໍລິສັດທີ່ປຶກສາທີ່ປະຕິບັດການບໍລິການທີ່ຕ້ອງການ *[ບໍລິການພັດທະນາເວັບໄຊ, ຖານຂໍ້ມູນ, ການຂຽນໂປແກຣມ, ການອອບແບບ UX/UI, ການເຮັດ SEO, CM];*
3. ສຳລັບໜ້າວຽກທີ່ຈະມອບໝາຍ (TOR) ລາຍລະອຽດ ສາມາດພົວພັນເອົາເອກະສານໄດ້ຢູ່ທີ່ຊັ້ນ 03 ຫ້ອງ 301 ຂອງຫ້ອງການສຳນັກງານສົ່ງເສີມຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ, ກະຊວງອຸດສາຫະກຳ ແລະ ການຄ້າ, ເບີໂທ 021 410005, 020 2309 8876 (ໃນໂມງລັດຖະການ 8:30 ໂມງ ຫາ 16:00ໂມງ, ວັນຈັນ ເຖິງ ວັນສຸກ);
4. ທສວ ຂໍເຊີນບໍລິສັດທີ່ປຶກສາ " ທີ່ປຶກສາ" ທີ່ມີຄວາມສົນໃຈ ຍື່ນໜັງສືສະແດງຄວາມສົນໃຈຂອງຕົນ ເພື່ອສະໜອງການບໍລິການດັ່ງກ່າວ. ບໍລິສັດທີ່ມີຄວາມສົນໃຈ ຕ້ອງສະໜອງຂໍ້ມູນທີ່ສະແດງເຖິງຄວາມເໝາະສົມໃນການສະໜອງການບໍລິການ ທີ່ມີຄຸນວຸດທິ ແລະ ມີປະສົບການທີ່ກ່ຽວຂ້ອງ ໃນການປະຕິບັດການບໍລິການດັ່ງກ່າວ. ມາດຖານການຄັດເລືອກບໍລິສັດເຂົ້າໃນບັນຊີຄັດເລືອກ (ບັນຊີສັ້ນ) ສຳລັບການບໍລິການມີດັ່ງນີ້:
   - ຕ້ອງເປັນບໍລິສັດ ທີ່ຖືກຕ້ອງຕາມກົດໝາຍໃນການດຳເນີນງານ ກ່ຽວກັບການບໍລິການທີ່ປຶກສາ (ໃບອະນຸຍາດດຳເນີນທຸລະກິດ) ເປັນບໍລິສັດເອກະລາດ ສຳລັບວຽກງານການບໍລິການທີ່ກ່ຽວຂ້ອງ;
   - ຕ້ອງມີໃບຢັ້ງຢືນການເສຍອາກອນ ປະຈຳປີ 2024 ຫຼື 2023;
   - ມີຊ່ຽວຊານ ຫຼື ບຸກຄະລາກອນ ທີ່ມີປະສົບການ ໃນການພັດທະນາເວັບໄຊ, ຖານຂໍ້ມູນ, ການຂຽນໂປແກມ ຢ່າງໜ້ອຍ 5 ປີຂຶ້ນໄປ;
   - ມີຄວາມຊ່ຽວຊານດ້ານເຕັກນິກການສ້າງເວັບໄຊ ເປັນຕົ້ນການອອບແບບ UX/UI, ການເຮັດ SEO, CMS;
   - ຜູ້ຈັດການໂຄງການ (Project Manager) ຕ້ອງມີປະສົບການຢ່າງນ້ອຍ 05 ປີ ພ້ອມທັງສະແດງຫຼັກຖານຄວາມສຳເລັດໃນການບໍລິການ ທີ່ມີລັກສະນະຄ້າຍຄືກັນຢ່າງໜ້ອຍ 03 ສັນຍາ ທີ່ພົວພັນກັບ [ການພັດທະນາເວັບໄຊ, ຖານຂໍ້ມູນ, ການຂຽນໂປແກມ, ການອອບແບບ UX/UI, ການເຮັດ SEO, CMS] ໂດຍສະເພາະການບໍລິການທີ່ປຶກສາພາຍໃນປະເທດ ຫລື ໃນບັນດາກະຊວງຕ່າງໆ;

- ສະໜອງໂຄງຮ່າງການຈັດຕັ້ງ ແລະ ບັນຊີລາຍຊື່, ຊີວະປະຫວັດຂອງຜູ້ຊ່ຽວຊານ ຫຼື ຫົວໜ້າທີມງານ ແລະ ພະນັກງານຫຼັກ ເພື່ອເປັນຂໍ້ມູນໃນການຂະບວນການຄັດເລືອກເຂົ້າໃນບັນຊີ (ບັນຊີສັ້ນ).

5. ບໍລິສັດທີ່ປຶກສາຈະຖືກຄັດເລືອກຕາມຮູບແບບຈັດຈ້າງ *[ສະເພາະຄຸນນະພາບ]* ຕາມຫຼັກການຈັດຊື້-ຈັດຈ້າງ ສໍາລັບງົບປະມານຂອງລັດ ທີ່ກໍານົດໄວ້ໃນບົດແນະນໍາການຈັດຕັ້ງປະຕິບັດກົດຫມາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019;
6. ເອກະສານການສະແດງຄວາມສົນໃຈ ຕ້ອງສົ່ງເຖິງທີ່ຢູ່ຂ້າງລຸ່ມນີ້ ແລະ ປິດຮັບເອກະສານສະແດງຄວາມສົນໃຈ ໃນວັນທີ..30...ເມສາ 2025 ສົ່ງຢູ່ທີ່ຊັ້ນ 03, ຫ້ອງ 301 ຂອງສໍານັກງານສົ່ງເສີມຈຸນລະວິສາຫະກິດວິສາຫະກິດຂະໜາດນ້ອຍ ແລະ ກາງ, ກະຊວງອຸດສາຫະກໍາ ແລະ ການຄ້າ, ເບີໂທ 021 410005, 020 2309 8876 (ໃນໂມງລັດຖະການ 8:30 ໂມງ ຫາ 16:00ໂມງ, ວັນຈັນ ເຖິງ ວັນສຸກ).

**<u>ໝາຍເຫດ</u>**: ທຸກເອກະສານຕ້ອງເປັນສະບັບພາສາລາວທັງໝົດ.

**ຜູ້ອໍານວຍການກອງທຶນ**

ສະເຫຼີມໄຊ ຫຼຸ່ງນພີ